**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະຈັດຕັ້ງສູນກາງພັກ

ຫ້ອງການ

ເລກທີ 386 /ຫກ

ນະຄອນຫລວງວຽງຈັນ, ວັນທີ 07 ກໍລະກົດ 2026

# ແຈ້ງການປະມູນ

ເຖິງ: ບັນດາບໍລິສັດບຸກຄົນ, ນິຕິບຸກຄົນ ທີ່ນັບຖື.

**ເຊີນ: ເຂົ້າຮ່ວມການປະມູນທີ່ປຶກສາ ແລະ ອອກແບບ ການສ້າງລະບົບຄຸ້ມຄອງຂໍ້ມູນພະນັກງານ-ລັດຖະກອນ ແລະ ພາລະກອນ ແບບທັນສະໄໝ.**

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30 /ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການ ຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 945 /ຫກ ລົງວັນທີ 05 ທັນວາ 2025.

ຫ້ອງການ ຄະນະຈັດຕັ້ງສູນກາງພັກ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນ ຊາບວ່າ: ຄະນະຈັດຕັ້ງສູນກາງພັກ ຈະໄດ້ມີການອອກແບບໃນການສ້າງລະບົບຄຸ້ມຄອງຂໍ້ມູນພະນັກງານ-ລັດຖະກອນ ແລະ ພາລະກອນ ແບບທັນສະໄໝ ເພື່ອຍົກລະດັບໃນການຄຸ້ມຄອງຂໍ້ມູນທີ່ທັນສະໄໝ. ສະນັ້ນ, ຈຶ່ງແຈ້ງມາຍັງບໍລິສັດທີ່ມີຄວາມສົນໃຈ ເພື່ອເຂົ້າຮ່ວມການປະມູນເປັນທີ່ປຶກສາ ແລະ ອອກແບບການສ້າງລະບົບໃນຄັ້ງນີ້:

❖ **ເງື່ອນໄຂຕ່າງໆຂອງບໍລິສັດ:**

1. ເປັນບໍລິສັດຂອງຄົນລາວ 100 % ແລະ ດໍາເນີນທຸລະກິດທີ່ຖືກຕ້ອງຕາມລະບຽບກົດໝາຍ ຂອງ ສປປ ລາວ;
2. ສາມາດອອກແບບລະບົບໄດ້ຕາມຄວາມຕ້ອງການ ແລະ ທັນກັບເວລາທີ່ກໍານົດໄວ້;
3. ສາມາດຮອງຮັບການຊໍາລະດ້ວຍລະບົບເງິນໂອນ ຕາມງົບປະມານຂອງລັດ;
4. ເອກະສານທີ່ນໍາມາສະແດງຕໍ່ຄະນະຮັບຜິດຊອບປະກອບມີ: 1) ປະຫວັດ ແລະ ປະສົບການ, 2) ໃບທະບຽນວິສາຫະກິດ, 3) ໃບອະນຸຍາດດໍາເນີນທຸລະກິດ, 4) ໃບທະບຽນອາກອນປີ 2025 ແຊັກວິຊາຄໍ້າປະກັນຊອງປະມູນ 2% ຂອງມູນຄ່າ ແລະ ບາງເອກະສານອື່ນໆ ທີ່ກ່ຽວຂ້ອງກັບບໍລິສັດ.

❖ **ການພົວພັນເອົາເອກະສານ:**

ບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄຸນສົມບັດຄົບຖ້ວນ ສາມາດພົວພັນເອົາເອກະສານບົດສະເໜີ (REP) ແລະ ລົງທະບຽນບໍລິສັດ ເພື່ອເຂົ້າຮ່ວມການປະມູນໄດ້ທີ່ພະແນກຄຸ້ມຄອງ ແລະ ບໍລິຫານ ຫ້ອງການຄະນະຈັດຕັ້ງສູນກາງພັກ (ໃນຮົ້ວຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ), ຜູ້ປະສານງານ ທ້າວ ບົວພາ ດວງປັນຍາ ເບີໂທ: 020 2294 3483 (ໃນລາຄາ 1.000.000 ກີບ/ຊອງ).

❖ **ກໍານົດເວລາຂາຍຊອງ, ສົ່ງຊອງ ແລະ ເປີດຊອງປະມູນ:**

- ຂາຍຊ່ອງປະມູນ ເລີ່ມແຕ່ ວັນທີ 13 ກໍລະກົດ 2026 ຫາ ວັນທີ 11 ສິງຫາ 2026 ໃນໂມງລັດຖະການ;
- ກໍານົດສົ່ງບົດສະເໜີ (REP) ແລະ ລາຄາປະມູນ ວັນທີ 12 ສິງຫາ 2026 ບໍ່ໃຫ້ກາຍເວລາ 9:30 ໂມງ;
- ເປີດຊອງປະມູນທາງດ້ານຄຸນວຸດທິຂອງບໍລິສັດ ວັນທີ 12 ສິງຫາ 2026 ເວລາ 9:40 ໂມງ (ຫ້ອງປະຊຸມຊັ້ນ IV, ໃນຮົ້ວ ຫສນຍ);
- ເປີດຊອງປະມູນດ້ານລາຄາ ວັນທີ 13 ສິງຫາ 2026 ເວລາ 9:30 ໂມງ (ຫ້ອງປະຊຸມຊັ້ນ III, ໃນຮົ້ວ ຫສນຍ).

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນ ເພື່ອເຂົ້າຮ່ວມການປະມູນໃນຄັ້ງນີ້ນໍາພວກເຮົາດ້ວຍ.

**ຫົວໜ້າຫ້ອງການ**

ຄະນະຈັດຕັ້ງສູນກາງພັກ ຫ້ອງການ

**ວັນນະ ບຸບຜາ**